ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ພະແນກເຕັກໂນໂລຊີ ແລະ ການສື່ສານ

ເລກທີ: 462/ພຕສ

ອຸດົມໄຊ, ວັນທີ 15 ມິຖຸນາ 2026

# ແຈ້ງການ

**ເຖິງ:** ບັນດາທ່ານ ຜູ້ຊົມໃຊ້ສື່ສັງຄົມອອນລາຍ ພາຍໃນແຂວງອຸດົມໄຊ.

**ເລື່ອງ:** ເພີ່ມສະຕິ ແລະ ລະມັດລະວັງຕົວ ໃນການນຳໃຊ້ສື່ສັງຄົມອອນລາຍ ປ້ອງກັນການຕົກເປັນເຫຍື່ອຂອງກຸ່ມມິດສາຊີບ.

- ອີງຕາມ ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ, ສະບັບເລກທີ 193/ຄປຂ, ລົງວັນທີ 20 ກຸມພາ 2026;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການນຳໃຊ້, ສະກັດກັ້ນ ແລະ ແກ້ໄຂບັນຫາສື່ສັງຄົມອອນລາຍ ຢູ່ແຂວງອຸດົມໄຊ, ສະບັບເລກທີ 1009/ອຊ, ລົງວັນທີ 31 ສິງຫາ 2023;
- ອີງຕາມ ແຈ້ງການ ຫ້ອງການ ກະຊວງເຕັກໂນໂລຊີ ແລະ ການສື່ສານ ວ່າດ້ວຍ ການເພີ່ມສະຕິ ແລະ ຄວາມລະມັດລະວັງໃນການນຳໃຊ້ສື່ສັງຄົມອອນລາຍ, ສະບັບເລກທີ 1096/ຫກ.ກຕສ, ລົງວັນທີ 10 ມິຖຸນາ 2026.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ປັດຈຸບັນ ມີກຸ່ມມິດສາຊີບ ໄດ້ນຳໃຊ້ກົນອຸບາຍທີ່ຫຼາກຫຼາຍວິທີການ ແລະ ແບບຮູບ ໃນການຕົວະເອົາຂໍ້ມູນສ່ວນຕົວຜ່ານສື່ສັງຄົມອອນລາຍ ເພື່ອໃຊ້ເປັນຂໍ້ຕໍ່ລອງ, ຄາດເດົາລະຫັດຜ່ານ ແລະ ຢັ້ງຢືນຕົວຕົນ ໃນການເຂົ້າເຖິງບັນຊີທະນາຄານຂອງບັນດາທ່ານ ແລ້ວນຳໄປດຳເນີນທຸລະກຳ ຫຼື ໂອນເງິນອອກຈາກບັນຊີຂອງບັນດາທ່ານ. ສະນັ້ນ, ເພື່ອເປັນການປົກປ້ອງຂໍ້ມູນ ແລະ ຊັບສິນຂອງທ່ານ ໃຫ້ມີຄວາມປອດໄພ. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ຈຶ່ງແຈ້ງມາໃຫ້ບັນດາທ່ານ ຜູ້ຊົມໃຊ້ສື່ສັງຄົມອອນລາຍ ພາຍໃນແຂວງ ໄດ້ເພີ່ມສະຕິ ແລະ ລະມັດລະວັງຕົວ ໂດຍໃຫ້ປະຕິບັດຕາມຄຳແນະນຳ ດັ່ງນີ້:

1. **ບໍ່ຄວນເຊື່ອ ແລະ ປະຕິບັດຕາມ:** ຖ້າມີບຸກຄົນໃດໜຶ່ງ ໂທ ຫຼື ສົ່ງຂໍ້ຄວາມມາແຈ້ງໃຫ້ບອກລະຫັດທາງເຕັກນິກ (OTP - One Time Password), ລະຫັດຜ່ານ (Password), ຂໍ້ມູນບັດປະຈຳຕົວ ຫຼື ສະແກນໃບໜ້າ.
2. **ຢ່າກົດລິ້ງ:** ຖ້າໄດ້ຮັບລິ້ງທີ່ສົ່ງມາທາງຂໍ້ຄວາມສັ້ນ (SMS) ຫຼື ສື່ສັງຄົມອອນລາຍ ຈາກແຫຼ່ງທີ່ບໍ່ໜ້າເຊື່ອຖື.
3. **ກວດສອບຄືນ:** ຖ້າມີການອ້າງຊື່ບໍລິສັດ ຫຼື ໜ່ວຍງານໃດໜຶ່ງ ທີ່ຕ້ອງການຂໍ້ມູນ ຫຼື ເອກະສານ, ໃຫ້ຕິດຕໍ່ສອບຖາມຜ່ານເບີໂທລະສັບ ຫຼື ເວັບໄຊທາງການ ຂອງໜ່ວຍງານນັ້ນໂດຍກົງ ເພື່ອກວດສອບຄືນຄວາມຖືກຕ້ອງ.

4. **ສຶກສາ ແລະ ຕິດຕາມຂ່າວສານ:** ຕິດຕາມຂ່າວສານກ່ຽວກັບຄວາມປອດໄພທາງໄຊເບີ ຈາກພາກລັດ ເພື່ອໃຫ້ຮູ້ທັນກົນອຸບາຍໃໝ່ໆ ຂອງກຸ່ມມິດສາຊີບ.
5. ຖ້າຫາກພົບເຫັນກໍລະນີສົງໄສ ສາມາດແຈ້ງຂໍ້ມູນ ແລະ ສອບຖາມກັບ ສູນຕ້ານອາຊະຍາກຳທາງອອນລາຍ ເລກໝາຍໂທລະສັບ 1533 ໄດ້ຕະຫຼອດ 24 ຊົ່ວໂມງ ຫຼື ແຈ້ງຂໍ້ມູນ ແລະ ສອບຖາມ ຜ່ານພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ຜ່ານທາງເວັບໄຊ : https://www.csirtodx.gov.la/incident , ເຟສບຸກ : https://www.facebook.com/csirtodx

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອໃຫ້ບັນດາທ່ານ ຜູ້ຊົມໃຊ້ສື່ສັງຄົມອອນລາຍ ພາຍໃນແຂວງອຸດົມໄຊ ໄດ້ຮັບຊາບ ແລະ ເພີ່ມຄວາມລະມັດລະວັງຕົວ ຕໍ່ກັບກົນອຸບາຍເຫຼົ່ານີ້.

**ຫົວໜ້າພະແນກ**

**ນ. ປິ່ນຄຳ ອຸ່ນລະຄອນ**